SOULIYA et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 273 - 284

# ປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

**ຕຸລາກອນ ສຸລິຍາ, ສີປະເສີດ ປານພອງເພັດ, ເກດສະລິນລຳໄພພັນ, ຂັນທະລີ ສີດາວົງ ແລະ ໄພວັນ ວັດທະນາວົງ**

*ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

*ຕິດຕໍ່ພົວພັນ:* *ຕຸລາກອນ ສຸລິຍາ, ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ເບີໂທ: +856 20 2862 2286, ອີເມວ: Souliya_SU@yahoo.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 25 ກັນຍາ 2021*

*ປັບປຸງສຳເລັດ: 2 ພະຈິກ 2021*

*ການຕອບຮັບ: 12 ພະຈິກ 2021*

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າໃນຄັ້ງນີ້ ມີວັດຖຸປະສົງຫຼັກ ຄືເພື່ອ: ຊອກຫາປັດໃຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ ຈຳນວນ 92 ຄົນ ເຊິ່ງໄດ້ມາດ້ວຍການສຸ່ມແບບແລນດອມ, ເຄື່ອງທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນ ແມ່ນ ແບບສອບຖາມຊຶ່ງປະກອບມີ 5 ດ້ານປັດໄຈ ເຊັ່ນ: ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ, ປັດໄຈທາງດ້ານຕົວຜູ້ຮຽນ, ປັດໄຈດ້ານຫຼັກສູດ, ປັດໄຈທາງດ້ານສັງຄົມ, ປັດໃຈທາງດ້ານຫ້ອງຮຽນ ແລະ ສິ່ງແວດລ້ອມອ້ອມຂ້າງ. ຜົນຂອງການຄົ້ນຄວ້າສະແດງໃຫ້ເຫັນວ່າ ໃນບັນດາປັດໄຈທັງ 5 ນີ້, ປັດໄຈດ້ານຫຼັກສູດ ເປັນປັດໄຈຫຼັກທີ່ເຮັດໃຫ້ນັກສຶກສາ ສາຂາຄູພາສາອັງກິດ ບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດ ແລະເວົ້າພາສາອັງກິດບໍ່ເກັ່ງ ໂດຍສະເພາະ ຫຼັກສູດທີ່ພວມໃຊ້ໃນປັດຈຸບັນ ຍັງບໍ່ສອດຄ່ອງຕາມຈຸດປະສົງ ເພາະວ່າມີໝວດວິຊາສະເພາະໜ້ອຍເກີນໄປ, ນອກຈາກນີ້ ການຈັດລາຍວິຊາຮຽນໃນແຕ່ລະພາກຮຽນຍັງບໍ່ທັນເໝາະສົມຊຶ່ງບາງພາກຮຽນກໍ່ມີວິຊາໝວດທົ່ວໄປຫຼາຍເກີນໄປ ແລະ ຍິ່ງໄປກວ່ານັ້ນ ການສ້າງກິດຈະກຳສົ່ງເສີມການເວົ້າພາສາອັງກິດບໍ່ຄ່ອຍມີ ເຮັດໃຫ້ນັກສຶກສາເວົ້າພາສາອັງກິດບໍ່ໄດ້ດີເທົ່າທີ່ຄວນ ທັດຈາກປັດໄຈດ້ານຫຼັກສູດນັ້ນກໍ່ຄື ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ ໂດຍສະເພາະອາຈານສອນ ບໍ່ຄ່ອຍໄດ້ນຳໃຊ້ ກິດຈະກຳສົ່ງເສີມການເວົ້າ ເຮັດໃຫ້ນັກສຶກສາບໍ່ມີແຮງກະຕຸ້ນໃນການເວົ້າພາສາອັງກິດໃນຫ້ອງຮຽນ ແລະ ການສອນຂອງອາຈານສ່ວນໃຫຍ່ແມ່ນເວົ້າພາສາລາວຫຼາຍເກີນໄປເຮັດໃຫ້ນັກສຶກສາເບື່ອ ແລະບໍ່ຢາກເວົ້າພາສາອັງກິດໃນເວລາຮຽນ ທັດຈາກນັ້ນ ແມ່ນປັດໄຈທາງດ້ານຕົວຜູ້ຮຽນ ໂດຍສະເພາະ ການແບ່ງເວລາເຂົ້າຮຽນພາສາອັງກິດແຕ່ລະມື້ມີໜ້ອຍເປັນສາເຫດເຮັດໃຫ້ນັກສຶກສາເອງເວົ້າພາສາອັງກິດບໍ່ໄດ້ດີ ແລະ ພື້ນຖານພາສາອັງກິດກ່ອນເຂົ້າຮຽນໃນມະຫາວິທະຍາໄລຕ່ຳເຮັດໃຫ້ຕົນເອງບໍ່ມີຄວາມກະຕືລືລົ້ນໃນການຮຽນ

**ຄຳສັບສຳຄັນ:** *ການເວົ້າພາສາອັງກິດຂອງນັກສຶກສາ ຄູພາສາອັງກິດ ຄະນະສຶກສາສາດ, ປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດໃນຫ້ອງຮຽນ*

SOULIYA et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 273 - 284

# Demotivating Factors on English Speaking of English Program Students, Faculty of Education, Souphanouvong University

**Toulakone Souliya[1], Sipaseuth Phanfongpet, Ketsalinh Lamphaiphan, Khanthaly Sidavong and Phayvanh Vatthanavong**

*Department of Language Pedagogy, Faculty of Education ,Souphanouvong University, Lao PDR*

***[1]Correspondence:***
*Toulakone Souliya, Department of Language Pedagogy, Faculty of Education, Souphanouvong University, Tel: +856 20 2862 2286, E-mail:* *Souliya_SU@yahool.com*

***Article Info:***
*Submitted: Sep 25, 2021*
*Revised: Nov2, 2021*
*Accepted: Nov 12, 2021*

**Abstract**

The purpose of this study was to investigate the demotivating factors on English speaking of the students in English program Faculty of Education Souphanouvong University, the sample group of this study was 92 English program students which was selected by random. The research instrument was questionnaire designed by the researcher and compose of 5 factors as the characteristic and teaching style of the teacher, student factor, curriculum factor, social factor, classroom environment factor. The result exhibited that curriculum factor was the highest and the main demotivating factor caused English program students lost their motivation on English speaking in their classes while characteristic and teaching style of the teacher was the second range that was demotivating factor and followed by student factor, classroom environment was the last demotivating factor on English speaking of the students in English program faculty of Education Souphanouvong University.

**Keywords:** *English speaking of the students in English program, demotivating factors*

## 1. ພາກສະເໜີ

ໃນຄວາມເປັນຈິງຕາມພາວະວິໄສ ໃນສັງຄົມຍຸກປັດຈຸບັນນີ້ ມີບັນດາປະຖົມປັດໄຈຫຼາຍໆດ້ານ ທີ່ສົ່ງຜົນຕໍ່ຂະບວນການສອນ ແລະ ການຮຽນຮູ້ຂອງນັກສຶກສາ ໂດຍສະເພາະຜູ້ທີ່ຮຽນພາສາອັງກິດ ເປັນພາສາທີ່ສອງ ຫຼື ພາສາຕ່າງປະເທດ. ໜຶ່ງໃນບັນດາປັດໄຈທີ່ສໍາຄັນດັ່ງກ່າວນັ້ນ ກໍ່ຄືປັດໄຈທີ່ສ້າງແຮງບັນດານໃຈ ຫຼື ແຮງກະຕຸ້ນ (motivating factors) ໃນການຮຽນຮູ້ຂອງນັກສຶກສາ, ບັນດານັກຄົ້ນຄວ້າວິໄຈ ແລະ ຜູ້ທີ່ເປັນຄູສອນ ຕ່າງກໍ່ຍອມຮັບວ່າ ປັດໄຈທີ່ສ້າງແຮງບັນດານໃຈ ຫຼື ແຮງກະຕຸ້ນ ເປັນປັດໄຈທີ່ສໍາຄັນທີ່ສຸດ ທີ່ສົ່ງຜົນໂດຍກົງຕໍ່ລະດັບຄວາມສໍາເລັດຂອງການຮຽນຮູ້ຂອງນັກສຶກສາ. ການຄົ້ນຄວ້າຫາແຫຼ່ງທີ່ມາເບື້ອງຕົ້ນຂອງແຮງບັນດານໃຈໃນການຮຽນພາສາຕ່າງປະເທດ ຫຼື ພາສາທີສອງ (Jonhson 1998, Ervard 2001) ຂອງນັກສຶກສາ ພົບວ່າ ນັກສຶກສາຜູ້ທີ່ມີແຮງກະຕູ້ນ ຫຼື ແຮງບັນດານໃຈສູງ ຈະໄດ້ຮັບຜົນສໍາເລັດ ແລະ ມີປະສິດທິພາບໃນຫານຮຽນສູງກວ່າ ນັກສຶກສາຜູ້ທີ່ມີແຮງກະຕູ້ນຫຼືແຮງບັນດານໃຈຕໍ່າ.

ໃນທາງກົງກັນຂ້າມ, ສິ່ງທີ່ກົງກັນຂ້າມກັບແຮງບັນດານໃຈ ຫຼື ແຮງກະຕູ້ນນັ້ນ ກໍ່ຄືປັດໄຈຫຼຸດແຮງກະຕູ້ນ ຫຼື ແຮງບັນດານໃຈ (demotivating factors) ຊຶ່ງເຮັດໃຫ້ຜູ້ຮຽນ ແລະ ຜູ້ສອນບໍ່ມີຄວາມກະຕືລືລົ້ນໃນການຮຽນ ໂດຍສະເພາະ ແມ່ນການຮຽນພາສາອັງກິດເປັນພາສາຕ່າງປະເທດ. ປັດໄຈຫຼຸດແຮງກະຕູ້ນດັ່ງກ່າວ ເປັນຕົວທ່ວງດຶງ ຫຼື

ຂັດຂວາງແຮງບັນດານໃຈໃນການຈັດຕັ້ງປະຕິບັດການຮຽນ-ການສອນ ເພື່ອເປົ້າໝາຍອັນໃດອັນໜຶ່ງ. ພວກເຮົາຕ່າງກໍ່ຮູ້ແລ້ວວ່າແຮງບັນດານໃຈ ໝາຍເຖິງຄວາມພະຍາຍາມ, ຄວາມຕັ້ງໃຈ ແລະ ຄວາມພູມໃຈໃນການກະທຳສິ່ງໃດສິ່ງໜຶ່ງ ເພື່ອໃຫ້ບັນລຸເປົ້າໝາຍ. ສະນັ້ນ ຄົນທີ່ບໍ່ມີແຮງບັນດານໃຈແມ່ນຄົນທີ່ຂາດຄວາມຕັ້ງໃຈ, ຄວາມພະຍາຍາມ ແລະ ຄວາມພູມໃຈທີ່ກະທຳສິ່ງໃດສິ່ງໜຶ່ງປາສະຈາກເປົ້າໝາຍ, ນອກຈາກນີ້ແລ້ວ ນັກສຶກສາທີ່ມີແຮງບັນດານໃຈ ຫຼື ແຮງກະຕຸ້ນ ແຕ່ບໍ່ມີຄວາມສົນໃຈຕໍ່ສິ່ງໃດໜຶ່ງ ດ້ວຍເຫດຜົນບາງຢ່າງ ສຸດທ້າຍກໍ່ຈະກາຍເປັນຄົນທີ່ບໍ່ມີແຮງບັນດານໃຈ ຫຼື ແຮງກະຕຸ້ນດັ່ງກ່າວ. (Dornyei, 2001). ຜົນກະທົບຂອງບັນດາປັດໄຈຫຼຸດແຮງກະຕຸ້ນ ຫຼື ແຮງບັນດານໃຈ (demotivating factor) ໃນການຮຽນພາສາອັງກິດເປັນພາສາຕ່າງປະເທດ ເຫັນໄດ້ຊັດເຈັນ ໂດຍສະເພາະສະແດງອອກໃນຜົນການຮຽນ, ມີນັກສຶກສາຈຳນວນຫຼວງຫຼາຍບໍ່ສາມາດສື່ສານພາສາອັງກິດກັບຄົນຕ່າງປະເທດ, ຮຽນຈົບແລ້ວແຕ່ບໍ່ສາມາດນຳໃຊ້ພາສາອັງກິດເຂົ້າໃນໜ້າທີ່ວຽກງານຈຳເປັນໂດຍສະເພາະແມ່ນການຕິດຕໍ່ສື່ສານໃນລະດັບສາກົນ, ບັນຫາເຫຼົ່ານີ້ແມ່ນມີໃນຫຼາຍຂົງເຂດການສຶກສາທົ່ວທຸກມູມໂລກ. ໃນ ສປປ ລາວ ກໍ່ເຊັ່ນດຽວກັນ ໂດຍສະເພາະ ແມ່ນນັກສຶກສາທີ່ພວມຮຽນພາສາອັງກິດໃນ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ, ມີນັກສຶກສາຈຳນວນຫຼວງຫຼາຍແມ່ນພວມປະເຊີນໜ້າກັບບັນຫາເລື່ອງການເວົ້າພາສາອັງກິດ. ໃນສາຂາຄູພາສາອັງກິດ ໃນຫ້ອງຮຽນພາສາອັງກິດທຸກຊັ້ນຮຽນ ເມື່ອມີການຮຽນ-ການສອນ, ນັກສຶກສາສ່ວນໃຫຍ່ແມ່ນບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດໃນຫ້ອງຮຽນ, ຈຳນວນໜຶ່ງກໍ່ວິຕົກກັງວົນຢ້ານເວົ້າຜິດ ແລະ ຢ້ານເສຍກຽດສັກສີຂອງຕົນໃນເວລາທີ່ເວົ້າຜິດ ແລະ ນັກສຶກສາອີກຈຳນວນໜຶ່ງກໍ່ບໍ່ມີຄວາມກະຕືລືລົ້ນໃນການເວົ້າ. ພວກເຂົາເຫຼົ່ານີ້ແມ່ນບໍ່ມີຄວາມເພິ່ງພໍໃຈໃນການຮຽນ,ການຮ່ວມກິດຈະກຳຕ່າງໆທີ່ອາຈານຈັດຂຶ້ນໃນຫ້ອງຮຽນ, ຂາດຄວາມສົນໃຈໃນເວົ້າພາສາອັງກິດ ແລະທໍ້ແທ້ໃນການຮຽນ. ການຂາດແຮງກະຕຸ້ນ ຫຼື ແຮງບັນດານໃຈແມ່ນສິ່ງຜົນກະທົບຕໍ່ການຮຽນຢ່າງໃຫຍ່ຫຼວງ ແລະ ໃນວົງກວ້າງ. ສະນັ້ນ, ການສຶກສາຫາປັດໄຈດັ່ງກ່າວນັ້ນ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນໃນຂົງເຂດວຽກງານການສຶກສາ ທີ່ອາຈານສອນຫຼືຜູ້ຮັບຊອບຕໍ່ການຮຽນທຸກຂັ້ນຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ແລະເຂົ້າໃຈບັນຫາດັ່ງກ່າວ. (Gorham & Christophel, 1992).

ເພື່ອແກ້ໄຂບັນຫາທີ່ໄດ້ກ່າວມາຂ້າງເທິງນັ້ນ, ມັນມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງທີ່ຕ້ອງເຂົ້າໃຈ ແລະ ຮູ້ກ່ຽວກັບບັນດາປັດໄຈຫຼຸດແຮງກະຕຸ້ນຂອງນັກສຶກສາເຫຼົ່ານັ້ນ ໂດຍສະເພາະທີ່ກ່ຽວຂ້ອງກັບການເວົ້າພາສາອັງກິດ ແລະ ຄຽງຄູ່ກັບນັ້ນມັນກໍ່ມີຄວາມສຳຄັນ ແລະຈຳເປັນເຊັ່ນກັນທີ່ຈະຕ້ອງຮູ້ກ່ຽວກັບປັດໄຈ ທີ່ຈະສ້າງແຮງຈູງໃຈໃຫ້ແກ່ນັກສຶກສາໃນການເວົ້າພາສາອັງກິດ ເນື່ອງຈາກວ່າປະເດັນດັ່ງກ່າວ ອາຈານຜູ້ສອນຫຼາຍໆທ່ານຕ່າງກໍ່ຢັ້ງຢືນວ່າ ເປັນປັດໄຈທີ່ມີຄວາມສຳຄັນຫຼາຍຕໍ່ຜົນສຳເລັດໃນການຮຽນຂອງນັກສຶກສາ. ຢ່າງໃດກໍ່ດີ ເພື່ອຊີ້ແຈງເຖິງປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດຂອງນັກສຶກສາ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງມີການສຶກສາຄົ້ນຄ້ວາເພື່ອຊອກຫາປະຖົມປັດໄຈດັ່ງກ່າວ, ຜົນຂອງການສຶກສາຄົ້ນຄວ້າຄັ້ງນີ້ຈະເປັນປະໂຫຍດຢ່າງໃຫຍ່ຫຼວງ ໃນການແກ້ໄຂບັນຫາການຮຽນ ການສອນພາສາອັງກິດ ພາຍໃນສາຂາຄູພາສາອັງກິດ ຄະນະສຶກສາສາດໃນອານາຄົດຂ້າງໜ້າ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອ ທົດສອບປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ. ດັ່ງນັ້ນ, ປະຊາກອນໃນການຄົ້ນຄວ້າຄັ້ງນີ້ແມ່ນນັກສຶກສາ ສາຂາຄູພາສາອັງກິດທັງໝົດ ທີ່ສັງກັດຢູ່ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ.

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄື້ວຄັ້ງນີ້ແມ່ນໄດ້ມາຈາກການສຸ່ມແບບເຈາະຈົງ ໂດຍໃຊ້ສູດຂອງ Krecie Mogan ດັ່ງສະແດງໃນຕາຕະລາງ 1:

P ແທນ ປະຊາກອນ

S ແທນ ຂະໜາດກຸ່ມຕົວຢ່າງ

ດັ່ງທີ່ໄດ້ກ່າວມາຂ້າງເທິງ ປະຊາກອນໃນກາຄົ້ນຄື້ວຄັ້ງນີ້ແມ່ນ 120 ຄົນ. ດັ່ງນັ້ນ, ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນ ນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ ຈຳນວນ 92 ຄົນ ເຊິ່ງໄດ້ມາດ້ວຍການສຸ່ມແບບແລນດອມ, ກຸ່ມຕົວຢ່າງຈະໄດ້ຖືກຕອບຄຳຖາມຈຳນວນ 2 ພາກ ເຊິ່ງເປັນຂໍ້ມູນສ່ວນຕົວ ແລະ ແບບສອບຖາມກ່ຽວກັບປັດໄຈລົດແຮງກະຕຸ້ນໃນການເວົ້າພາສາອັງກິດ.

## 2.2 ເຄື່ອງມືໃນການເກັບຂໍ້ມູນ

ຈຸດປະສົງໃນການສຶກສາຄົ້ນຄວ້າຄັ້ງນີ້ສ້າງຂຶ້ນເພື່ອຫາຄຳຕອບຂອງແບບສອບຖາມກ່ຽວກັບ ປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດຂອງນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ. ການເກັບກຳຂໍ້ມູນໃນການສຶກສາຄັ້ງນີ້ ເປັນແບບສອບຖາມແບບສຳຫຼວດມາດຕາສ່ວນ (Rating Scale) ໂດຍໃຊ້ສູດຂອງ Rebecca Oxford (1990) ແບບສອບຖາມຈະຖືກນຳມາສອບຖາມກັບກຸ່ມຕົວຢ່າງເພື່ອໃຫ້ໄດ້ຂໍ້ມູນຕາມຄວາມເປັນຈິງ ແລະ ເຊື່ອຖືໄດ້ ໃນນັ້ນແບບສອບຖາມໄດ້ແບ່ງອອກເປັນ 2 ພາກສ່ວນຄື:

ພາກສ່ວນທີ 1 ແມ່ນຂໍ້ມູນສ່ວນຕົວຂອງນັກສຶກສາ ເຊິ່ງກ່ຽວຂ້ອງກັບຂໍ້ມູນສ່ວນຕົວ ແລະ ລັກສະນະທາງວິຊາການເຊັ່ນ: ອາຍຸ, ເພດ.

ພາກສ່ວນທີ 2 ແມ່ນຂໍ້ມູນທີ່ກ່ຽວຂ້ອງກັບປັດຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ.

ໃນນັ້ນ ເນື້ອໃນຂອງແບບສອບຖາມ ແມ່ນໄດ້ມາຈາກທິດສະດີທີ່ກ່ຽວຂ້ອງ; ປັດໄຈລົດແຮງກະຕຸ້ນໃນການເວົ້າພາສາອັງກິດ ແມ່ນຂຶ້ນຢູ່ກັບເທັກນິກ ແລະ ຮູບແບບການສອນຂອງຜູ້ສອນ ເຊິ່ງປະກອບມີ 17 ຫົວຂໍ້. ສະພາບແວດລ້ອມໃນຫ້ອງຮຽນ 7 ຫົວຂໍ້, ການຫຼຸດແຮງຈູງໃຈ ແລະ ຄວາມສົນໃຈ 5 ຫົວຂໍ້, ລັກສະນະຂອງການຈັດຫ້ອງຮຽນ 4 ຫົວຂໍ້, ຄວາມຫຍຸ້ງຍາກໃນການຮຽນພາສາອັງກິດ 5 ຫົວຂໍ້, ເກຼດ ແລະ ຄະແນນທົດສອບປະກອບດ້ວຍ 5 ຫົວຂໍ້ ນອກຈາກນີ້ແບບສອບຖາມແມ່ນໄດ້ຖືກນຳໄປກວດສອບໂດຍຜູ້ນຳພາ ແລະ ຜູ້ຊ່ວຍ ເພື່ອກວດສອບປະສິດທິຜົນຂອງແບບສອບຖາມກ່ອນທີ່ຈະນຳມາໃຊ້ເຂົ້າໃນການສຶກສາ.

## 2.3 ການເກັບກຳຂໍ້ມູນ

ດັ່ງທີ່ໄດ້ກ່າວມາຂ້າງເທິງ ຈຸດປະສົງໃນການສຶກສາຄົ້ນຄວ້າແມ່ນ ເພື່ອຊອກຫາປັດໄຈລົດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ. ດັ່ງນັ້ນຂໍ້ມູນທີ່ໄດ້ຈາກການສຶກສາຄົ້ນຄວ້າຄັ້ງນີ້ຈະຄົບຖ້ວນຕ້ອງອາໄສການອອກແບບຂອງແບບສອບຖາມຢ່າງມີປະສິດທິພາບຕາມຂັ້ນຕອນ.

### 2.3.1 ຂັ້ນຕອນສຳລັບແບບສອບຖາມ

ແບບສອບຖາມຈະຖືກແຈກຢາຍໃຫ້ນັກສຶກສາ ສາຂາຄູພາສາອັງກິດໃນພາກປົກກະຕິຈຳນວນ 92 ຄົນ ໃນເດືອນ ມິຖຸນາ 2018. ກ່ອນນັກສຶກສາຈະຕອບແບບສອບຖາມ, ຜູ້ຄົ້ນຄວ້າອະທິບາຍວິທີຕອບຄຳຖາມໃຫ້ນັກສຶດສາເພື່ອໃຫ້ໄດ້ຮັບຄຳຕອບທີ່ຖືກຕ້ອງ ແລະ ຊັດເຈນໃນແຕ່ລະຄຳຕອບ. ຜູ້ຄົ້ນຄວ້າຈະເກັບແບບສອບຖາມພາຍໃນ 30 - 40 ນາທີ. ຫຼັງຈາກທີ່ໄດ້ຮັບແບບສອບຖາມແລ້ວ ຂໍ້ມູນຕ່າງໆຈະໄດ້ຖືກລວບລວມ ແລະ ບັນທຶກໄວ້ໃນຕາຕະລາງ ແລະຂໍ້ມູນທີ່ເປັນປະໂຫຍດຈະຖືກເລືອກ ໂດຍການວິເຄາະແບບສອບຖາສ່ວນຕົວ, ຂໍ້ມູນທັງໝົດໃນແຕ່ລະຄຳຖາມຈະຖືກລວບລວມເພື່ອນຳມາວິເຄາະໃນໂດເມນ (Domain).

### 2.3.2 ການວິເຄາະແບບປະລິມານ

ການວິເຄາະການຜັນປ່ຽນ (ANOVA)-One-Way in General Linear Model in Statistical Package

for the Social Science (SPSS) ຈະໄດ້ຖືກນຳໃຊ້ເຂົ້າໃນຜົນຂອງການວິເຄາະແບບສອບຖາມທາງປະລິມານສຳລັບແນວຄວາມຄິດສ່ວນຕົວ. ສະຖິຕິພັນລະນາໄດ້ຖືກນຳມາລວບລວມສຳລັບປັດໄຈທີ່ລຶດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ. ການວິເຄາະອີງຕາມເປີເຊັນ, ຄ່າສະເລ່ຍ, ຂໍ້ມູນທາງສະຖິຕິ. ຂໍ້ມູນຈະຖືກວິເຄາະ ໂດຍອີງຕາມເກນການປະເມີນມາດຕາສ່ວນປະເມີນຄ່າ (Rating Scale) ຄື:

ຄະແນນ 5 ໝາຍເຖິງ ເຫັນດີຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ເຫັນດີ

ຄະແນນ 3 ໝາຍເຖິງ ບໍ່ໝັ້ນໃຈ

ຄະແນນ 2 ໝາຍເຖິງ ບໍ່ເຫັນດີ

ຄະແນນ 1 ໝາຍເຖິງ ບໍ່ເຫັນດີທີ່ສຸດ

## 3. ຜົນໄດ້ຮັບ

ຜົນການຄົ້ນຄວ້າ ພົບວ່າ ປັດໄຈ ຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດຂອງນັກສຶກສາ ຫຼັກສູດຄູພາສາອັງກິດ ທີ່ກ່ຽວຂ້ອງກັບປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນເຫັນວ່າ ອາຈານບໍ່ຄ່ອຍໄດ້ນຳໃຊ້ ກິດຈະກຳສົ່ງເສີມການເວົ້າ ຊຶ່ງເຮັດໃຫ້ນັກສຶກສາບໍ່ມີແຮງກະຕຸ້ນໃນການເວົ້າພາສາອັງກິດໃນຫ້ອງຮຽນ ໂດຍມີຄ່າສະເລ່ຍ M = 3.96 ແລະ ຄ່າຜັນປ່ຽນມາດຖານ S.D = 0.91, ນອກຈາກນີ້ ການສອນຂອງອາຈານສ່ວນໃຫຍ່ແມ່ນເວົ້າພາສາລາວຫຼາຍເກີນໄປເຮັດໃຫ້ນັກສຶກສາເບື່ອ ແລະ ບໍ່ຢາກເວົ້າພາສາອັງກິດ ຊຶ່ງໄດ້ສະແດງອອກໃນຄ່າສະເລ່ຍ M = 3.85, ຄ່າຜັນປ່ຽນມາດຖານ S.D = 0.93 ແລະ ອາຈານມັກຈະຫົວຂວັນເວລານັກສຶກສາເວົ້າຜິດ ຫຼື ອອກສຽງຜິດ ເຮັດໃຫ້ນັກສຶກສາບໍ່ກ້າເວົ້າ ແລະ ບໍ່ມີຄວາມໝັ້ນໃຈແມ່ນມີຄ່າສະເລ່ຍ M = 2.80, ຄ່າຜັນປ່ຽນມາດຖານເທົ່າກັບ S.D = 1.38 ເວົ້າລວມແລ້ວ ປັດໄຈດ້ານການສິດສອນແມ່ນອາຈານບໍ່ຄ່ອຍຈະເນັ້ນໃສ່ກິດຈະກຳສົ່ງເສີມການເວົ້າ, ສ່ວນໃຫຍ່ແມ່ນເວົ້າພາສາລາວຫຼາຍເກີນໄປ ຈຶ່ງເຮັດໃຫ້ນັກສຶກສາເກີດຄວາມເບື່ອໜ່າຍ ແລະບໍ່ຢາກເວົ້າພາສາອັງກິດ ຍິ່ງໄປກວ່ານັ້ນ ການສິດສອນຂອງອາຈານຍັງຂາດການໃຊ້ເທັກນິກຕ່າງໆທີ່ຫຼາກຫຼາຍຮູບແບບ ເນື່ອງຈາກວ່າສ່ວນໃຫຍ່ແມ່ນໃຊ້ເທັກນິກການສອນແບບດັ່ງເດີມ ດັ່ງທີ່ສະແດງໃນຕາຕະລາງ 2.

ປັດໄຈດ້ານຕົວຜູ້ຮຽນ ເມື່ອພິຈາລະນາເປັນລາຍຂໍ້ເຫັນວ່າ ການແບ່ງເວລາເຂົ້າຮຽນພາສາອັງກິດແຕ່ລະມື້ມີໜ້ອຍເປັນສາເຫດເຮັດໃຫ້ນັກສຶກສາເອງເວົ້າພາສາອັງກິດບໍ່ໄດ້ດີ ເຊິ່ງມີຄ່າສະເລ່ຍ M = 4.19 ຄ່າຜັນປ່ຽນມາດຖານ S.D = 0.80 ຮອງລົງມາແມ່ນພື້ນຖານພາສາອັງກິດກ່ອນເຂົ້າຮຽນໃນມະຫາວິທະຍາໄລຕໍ່າເຮັດໃຫ້ຕົນເອງບໍ່ມີຄວາມກະຕືລືລົ້ນໃນການຮຽນເຊິ່ງມີຄ່າສະເລ່ຍ M = 3.88 ຄ່າຜັນປ່ຽນມາດຖານ S.D = 1.07, ແລະ ຄວາມຮູ້ທາງດ້ານຄຳສັບພາສາອັງກິດມີໜ້ອຍ ແລະ ຈຳກັດເຮັດໃຫ້ຕົນເອງມີບັນຫາໃນການເວົ້າພາສາອັງກິດ ເຊິ່ງມີຄ່າສະເລ່ຍ M = 3.73 ຄ່າຜັນປ່ຽນມາດຖານ S.D = 1.15, ນອກນີ້ນັກສຶກສາບໍ່ມີຄວາມໝັ້ນໃຈເວລາເວົ້າພາສາອັງກິດເພາະຢ້ານຜິດ ແລ້ວໝູ່ເພື່ອນຈະຫົວຂວັນ ເຊິ່ງມີຄ່າສະເລ່ຍ M = 3.57 ຄ່າຜັນປ່ຽນມາດຖານ S.D = 0.98, ຄວາມຮູ້ທາງດ້ານຫຼັກໄວຍາກອນພາສາອັງກິດມີໜ້ອຍ ແລະ ຈຳກັດເຮັດໃຫ້ຕົນເອງມີບັນຫາໃນການເວົ້າພາສາອັງກິດ M = 3.61 ຄ່າຜັນປ່ຽນມາດຖານ S.D = 1.06, ການສື່ສານຂອງຕົນເອງບໍ່ຄ່ອຍເກັ່ງເຮັດໃຫ້ຕົນເວົ້າພາສາອັງກິດບໍ່ເກັ່ງ ເຊິ່ງມີຄ່າສະເລ່ຍ M = 3.53 ຄ່າຜັນປ່ຽນມາດຖານ S.D = 1.02 ລຳດັບຖັດໄປແມ່ນຕົນເອງບໍ່ມີຄວາມຮູ້ໃນການຂຶ້ນ-ລົງສຽງ (Intonation) ຂອງພາສາອັງກິດເປັນສາເຫດເຮັດໃຫ້ຕົນເວົ້າພາສາອັງກິດບໍ່ເກັ່ງເຊິ່ງມີຄ່າສະເລ່ຍ M = 3.53 ຄ່າຜັນປ່ຽນມາດຖານ S.D = 1.20 ແລະ ນັກສຶກສາມີບັນຫາເລື່ອງການອອກສຽງພາສາອັງກິດ ເຊັ່ນ: ຫັນລີ້ນບໍ່ເປັນ, ອະໄວຍະວະທາງປາກຜິດປົກກະຕິ ເຊິ່ງມີຄ່າສະເລ່ຍ M = 3.00 ຄ່າຜັນປ່ຽນມາດຖານ S.D = 1.26, ຕົນເອງບໍ່ມີພອນສະຫວັນ-ພອນສະແຫວງໃນການຮຽນຮູ້ພາສາອັງກິດ ເຊິ່ງມີຄ່າສະເລ່ຍ M = 2.76 ຄ່າຜັນປ່ຽນມາດຖານ S.D = 1.03, ອັນດັບສຸດທ້າຍແມ່ນ

ນັກສຶກສາບໍ່ມີຄວາມມັກຮັກໃນການຮຽນຮູ້ພາສາອັງກິດ ຕັດສິນໃຈມາຮຽນເພາະຜູ້ປົກຄອງບັງຄັບໃຫ້ມາຮຽນ ເຊິ່ງມີຄ່າສະເລ່ຍ M = 1.96 ຄ່າຜັນປ່ຽນມາດຖານ S.D = 1.21 ເນື່ອງຈາກວ່ານັກສຶກສາສ່ວນໃຫຍ່ແມ່ນມີຄວາມມັກຮັກໃນການຮຽນຮູ້ພາສາອັງກິດ ຕັດສິນໃຈມາຮຽນ ໂດຍບໍ່ໄດ້ຖືກບັງຄັບຈາກຜູ້ປົກຄອງໃຫ້ມາເຂົ້າຮຽນ ດັ່ງທີ່ສະແດງໃນຕາຕະລາງ 3.

ປັດໄຈດ້ານຫຼັກສູດ ເຫັນວ່າຫຼັກສູດທີ່ພວມໃຊ້ຍັງບໍ່ສອດຄ່ອງຕາມຈຸດປະສົງ ເພາະວ່າມີໝວດວິຊາສະເພາະໜ້ອຍເກີນໄປ ຊຶ່ງເປັນປັດໄຈທີ່ລຶດການກະຕຸ້ນຕໍ່ການເວົ້າພາສາອັງກິດຂອງນັກສຶກສາຫຼາຍກວ່າໝູ່ໝົດໃນບັນດາປັດໄຈຫຍ່ອຍດ້ານຫຼູກສູດ, ຊຶ່ງມີຄ່າສະເລ່ຍ M = 4.65 ແລະຄ່າຜັນປ່ຽນມາດຕະຖານແມ່ນ SD= 0.62. ຮອງລົງມາແມ່ນ ລາຍວິຊາຮຽນທີ່ສົ່ງເສີມການເວົ້າພາສາອັງກິດມີຫນ້ອຍ ເຮັດໃຫ້ຜູ້ຮຽນເວົ້າພາສາອັງກິດບໍ່ໄດ້ດີ. ຊຶ່ງມີຄ່າສະເລ່ຍ M = 4.53 ແລະ ຄ່າຜັນປ່ຽນມາດຕະຖານແມ່ນ SD = 0.70 ແລະ ການຈັດລາຍວິຊາຮຽນໃນແຕ່ລະພາກຮຽນຍັງບໍ່ທັນເໝາະສົມຊຶ່ງບາງພາກຮຽນກໍ່ມີວິຊາໝວດທົ່ວໄປຫຼາຍເກີນໄປ, ຊຶ່ງມີຄ່າສະເລ່ຍ M = 4.46 ແລະຄ່າຜັນປ່ຽນມາດຕະຖານແມ່ນ SD = 0.76. ນອກຈາກນີ້ແລ້ວ ການສ້າງກິດຈະກໍາສົ່ງເສີມການເວົ້າພາສາອັງກິດບໍ່ຄ່ອຍມີ ເຮັດໃຫ້ນັກສຶກສາເວົ້າພາສາອັງກິດບໍ່ໄດ້ດີ ຊຶ່ງມີຄ່າສະເລ່ຍ M = 4.15 ແລະ ຄ່າຜັນປ່ຽນມາດຕະຖານແມ່ນ SD = 0.73 ດັ່ງທີ່ສະແດງໃນຕາຕະລາງ 4.

ປັດໄຈລຶດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາສາຂາຄູພາສາອັງກິດ ຄສສ ມສ ທີ່ກ່ຽວຂ້ອງກັບປັດໃຈທາງດ້ານສັງຄົມ ສະແດງໃຫ້ເຫັນວ່າ ໃນສັງຄົມຫຼືໝູ່ບ້ານຂອງນັກສຶກສາ ບໍ່ຄ່ອຍໄດ້ນໍາໃຊ້ພາສາອັງກິດ ນັກສຶກສາ ເລີຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M = 3.42 ແລະ ຄ່າຜັນປ່ຽນມາດຖານ SD = 1.06. ນອກຈາກນີ້ ໃນຄອບຄົວຂອງນັກສຶກສາ ບໍ່ມີໃຜສາມາດເວົ້າພາສາອັງກິດ ເປັນສາເຫດເຮັດໃຫ້ນັກສຶກສາບໍ່ຢາກຮຽນແລະເວົ້າພາສາອັງກິດ ໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M = 3.03 ແລະ ຄ່າຜັນປ່ຽນມາດຖານ SD = 1.37. ໃນທາງກົງກັນຂ້າມ ການເວົ້າພາສາອັງກິດ ບໍ່ໄດ້ເຮັດໃຫ້ວັດທະນາທໍາຊາວຕາເວັນຕົກ ມາທໍາລາຍວັດທະນາທໍາຊາດຕົນ ມີຄ່າສະເລ່ຍ M = 1.53 ແລະ ມີຄ່າຜັນປ່ຽນມາດຖານ SD = 0.98 ເຊິ່ງສະແດງໃຫ້ເຫັນວ່າ ປັດໄຈດັ່ງກ່າວ ວັດທະນາທໍາບໍ່ໄດ້ສົ່ງຜົນໃນການຮຽນເວົ້າພາສາອັງກິດຂອງນັກສຶກສາ ດັ່ງທີ່ສະແດງໃນຕາຕະລາງ 5.

ປັດໄຈທາງດ້ານຫ້ອງຮຽນ ແລະ ສິ່ງແວດລ້ອມອ້ອມຂ້າງ, ຜົນການ ວິເຄາະສະແດງໃຫ້ເຫັນວ່າ ບັນຍາກາດໃນຫ້ອງຮຽນຮ້ອນອົບເອົ້າ ເປັນສາເຫດເຮັດໃຫ້ນັກສຶກສາ ບໍ່ມີຄວາມກະຕືລືລົ້ນໃນການຮຽນ ແລະ ເວົ້າພາສາອັງກິດໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M = 4.03 ແລະ ຄ່າຜັນປ່ຽນມາດຖານ SD = 1.24, ນອກຈາກນີ້ແລ້ວ ຫ້ອງຮຽນກໍ່ຍັງມີຄວາມເປະເປື້ອນ ແລະ ມີສຽງນັບ ເປັນສາເຫດເຮັດໃຫ້ນັກສຶກສາບໍ່ມີຄວາມກະຕືລືລົ້ນໃນການຮຽນ ແລະ ເວົ້າພາສາອັງກິດ ຊຶ່ງມີຄ່າສະເລ່ຍ ຢູ່ໃນລະດັບ M = 3.42 ແລະຄ່າຜັນປ່ຽນມາດຖານ SD = 1.23 ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງທີ 6.

ດັ່ງທີ່ໄດ້ອະທິບາຍກ່ອນໜ້ານີ້, ການສໍາຫຼວດຊອກຫາປັດໄຈລຶດແຮງກະຕຸ້ນໃນການເວົ້າພາສາອັງກິດຂອງນັກສຶກສາ ຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ຄະນະຜູ້ສໍາຫຼວດໄດ້ອີງໃສ່ທິດສະດີ ຂອງຫຼາຍທ່ານ ແລະໄດ້ກໍານົດເອົາ 5 ດ້ານປັດໄຈ. ເມື່ອສັງລວມຄ່າສະເລ່ຍແຕ່ລະດ້ານແລ້ວ ເຫັນວ່າ ປັດໄຈທີ່ສໍາຄັນທີ່ສຸດຊຶ່ງເຮັດໃຫ້ນັກສຶກສາ ສາຂາຄູພາສາອັງກິດບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດ ນັ້ນກໍ່ຄືຫຼັກສູດ ໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M = 3.98 ແລະ ຄ່າຜັນປ່ຽນມາດຖານ SD = 0.83 ທັດຈາກນີ້ແມ່ນ ປັດໃຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ ໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M = 3.46 ແລະ ຄ່າຜັນປ່ຽນມາດຖານ SD = 0.93 ແລະຮອງລົງມາກໍ່ຄື ປັດໃຈທາງດ້ານຕົວຜູ້ຮຽນເອງ ໂດຍມີຄ່າສະເລ່ຍ ຢູ່ໃນລະດັບ M =

3.38 ແລະ ຄ່າຜັນປ່ຽນມາດຖານ SD = 1.08 ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງທີ 7

## 4. ວິພາກຜົນ

ເມື່ອປຽບທຽບຜົນຂອງການສຶກສາຄັ້ງນີ້ ກັບບັນດາທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງເຫັນວ່າ ຜົນການສຶກສາຄັ້ງນີ້ ແມ່ນໃກ້ຄຽງກັບຜົນການຄົ້ນຄ້ວາວິໄຈຂອງຫຼາຍທ່ານ ເຊັ່ນ: Gorham and Cristophel (1992) ຊຶ່ງໄດ້ທຳການຄົ້ນຄ້ວາວິໄຈເຖິງປັດໄຈທູດແຮງກະຕຸ້ນຂອງນັກສຶກສາ ວິທະຍາໄລ ຈຳນວນ 308 ຄົນ, ຜົນປະກົດວ່າ ປັດໄຈດ້ານຜູ້ສອນ ເປັນປັດໄຈທີ່ມີອິດທິພົນສົ່ງຜົນເຮັດໃຫ້ນັກສຶກສາ ບໍ່ມີແຮງກະຕຸ້ນໃນການຮຽນສູງທີ່ສຸດ ທັດຈາກນັ້ນແມ່ນ ເລື່ອງຫຼັກສູດ. Oxford (1998) ກໍໄດ້ທຳການສຶກສຄົ້ນຄ້ວາໃນຫົວຂໍ້ໃກ້ຄຽງກັນ ຜົນປະກົດວ່າ ປັດໄຈຫຼັກທີ່ຫຼຸດແຮງກະຕຸ້ນໃນການຮຽນ-ການເວົ້າພາສາອັງກິດ ແມ່ນ ຄວາມສຳພັນລະຫວ່າງ ອາຈານສອນ ແລະ ນັກຮຽນ, ທັດຈາກນັ້ນແມ່ນ ການຈັດກິດຈະກຳໃນຫ້ອງຮຽນແບບຊ້ຳຊາກ ຈຳເຈ ແລະ ໜ້າເບື່ອ ນອກຈາກນີ້ແລ້ວ ຍັງມີຜົນການວິໄຈທີ່ມີຜົນຄ້າຍຄືກັນເຊັ່ນ: Saikai and Kikuchi (2009) ໄດ້ສຳຫຼວດຈາກກຸ່ມຕົວຢ່າງຈຳນວນ 656 ຄົນ ເພື່ອຊອກຫາປັດໄຈຫຼັກທີ່ເຮັດໃຫ້ນັກຮຽນ ບໍ່ມີຄວາມກະຕືລືລົ້ນໃນການຮຽນ-ການເວົ້າພາສາອັງກິດ ຜົນປະກົດວ່າ ພຶດຕິກຳການສອນ ໃນຫ້ອງຮຽນຂອງຜູ້ສອນ ເປັນປັດໄຈລັກ ເຮັດໃຫ້ນັກຮຽນບໍ່ຢາກຮຽນພາສາອັງກິດ. ເຖິງຢ່າງໃດກໍ່ຕາມ, ເມື່ອປຽບທຽບຜົນການຄົ້ນຄວ້າໃນຄັ້ງນີ້ ກັບຜົນການຄົ້ນຄ້ວາຂອງຫຼາຍທ່ານທີ່ໄດ້ກ່າວມານີ້ແລ້ວເຫັນວ່າ ປັດໄຈຫຼັກເຮັດໃຫ້ນັກຮຽນບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດ ອັນດັບ 1 ແມ່ນພຶດຕິກາການສອນຂອງຄູ ແຕ່ສຳລັບຜົນການຄົ້ນຄ້ວາໃນຄັ້ງນີ້ ແມ່ນຫຼັກສູດ ເປັນປັດໄຈອັນດັບ 1 ເຮັດໃຫ້ນັກສຶກສາບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດ. ເມື່ອສຶກສາເນື້ອໃນຂອງຫຼັກສູດທີ່ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ພວມໃຊ້ໃນປັດຈຸບັນ ແລ້ວເຫັນວ່າ ເປັນຫຼັກສູດທີ່ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາເປັນຜູ້ຊີ້ນຳແລະ ກຳນົດລາຍວິຊາຕ່າງໆ, ມີທັງໝົດ 160 ໜ່ວຍກິດແບ່ງເປັນ 4 ໝວດວິຊາ ຄື: ໝວດວິຊາຄວາມຮູ້ທົ່ວໄປ, ພື້ນຖານວິຊາສະເພາະ, ໝວດວິຊາສະເພາະ ແລະ ໝວດວິຊາເລືອກ. ໃນນີ້ ລາຍວິຊາທີ່ສອນເປັນພາສາອັງກິດ ມີພຽງ 45 ໜ່ວຍກິດເທົ່ານັ້ນ ເຮັດໃຫ້ນັກສຶກສາບໍ່ໄດ້ຮຽນພາສາອັງກິດຫຼາຍເທົ່າທີ່ຄວນ ເຫັນໄດ້ວ່າ ນີ້ອາດເປັນປັດໄຈຫຼັກທີ່ເຮັດໃຫ້ນັກສຶກສາສາຂາຄູພາສາອັງກິດ ບໍ່ມີຄວາມກະຕືລືລົ້ນໃນການຮຽນພາສາອັງກິດ.

## 5. ສະຫຼຸບ

ການສຶກສາຄັ້ງນີ້ ແມ່ນມີວັດຖຸປະສົງເພື່ອ ຊອກຫາປັດໄຈຫຼຸດແຮງກະຕຸ້ນໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ຊຶ່ງໄດ້ສຶກສາໃນຂອບເຂດ 5 ດ້ານປັດໄຈ ເຊັ່ນ: ປັດໃຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ, ປັດໃຈທາງດ້ານຕົວຜູ້ຮຽນ, ປັດໃຈດ້ານຫຼັກສູດ, ປັດໃຈທາງດ້ານສັງຄົມ ແລະ ປັດໃຈທາງດ້ານຫ້ອງຮຽນ ແລະສິ່ງແວດລ້ອມອ້ອມຂ້າງ. ຜົນວິເຄາະ ຊີ້ໃຫ້ເຫັນວ່າ ໃນບັນດາປັດໄຈທັງ5 ນີ້, ປັດໄຈດ້ານຫຼັກສູດ ເປັນປັດໄຈຫຼັກທີ່ເຮັດໃຫ້ນັກສຶກສາ ສາຂາຄູພາສາອັງກິດ ບໍ່ມີຄວາມກະຕືລືລົ້ນໃນການເວົ້າພາສາອັງກິດ ແລະເວົ້າພາສາອັງກິດບໍ່ເກັ່ງ ໂດຍສະເພາະ ຫຼັກສູດທີ່ພວມໃຊ້ໃນປັດຈຸບັນຍັງບໍ່ສອດຄ່ອງຕາມຈຸດປະສົງ ເພາະວ່າມີໝວດວິຊາສະເພາະໜ້ອຍເກີນໄປ, ນອກຈາກນີ້ ການຈັດລາຍວິຊາຮຽນໃນແຕ່ລະພາກຮຽນຍັງບໍ່ທັນເໝາະສົມຊຶ່ງບາງພາກຮຽນກໍ່ມີວິຊາໝວດທົ່ວໄປຫຼາຍເກີນໄປ ແລະ ຍິ່ງໄປກວ່ານັ້ນ ການສ້າງກິດຈະກຳສົ່ງເສີມການເວົ້າພາສາອັງກິດບໍ່ຄ່ອຍມີ ເຮັດໃຫ້ນັກສຶກສາເວົ້າພາສາອັງກິດບໍ່ໄດ້ດີເທົ່າທີ່ຄວນ ທັດຈາກປັດໄຈດ້ານຫຼັກສູດນັ້ນກໍ່ຄື ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ ໂດຍສະເພາະ ອາຈານສອນ ບໍ່ຄ່ອຍໄດ້ນຳໃຊ້ ກິດຈະກຳສົ່ງເສີມການເວົ້າ ເຮັດໃຫ້ນັກສຶກສາບໍ່ມີແຮງກະຕຸ້ນໃນການເວົ້າພາສາອັງກິດໃນຫ້ອງຮຽນ ແລະ ການສອນຂອງອາຈານສ່ວນໃຫຍ່ແມ່ນເວົ້າພາສາລາວຫຼາຍເກີນໄປເຮັດໃຫ້ນັກສຶກ

ສາເບື່ອ ແລະບໍ່ຢາກເວົ້າພາສາອັງກິດໃນເວລາຮຽນ ທັດຈາກນັ້ນ ແມ່ນປັດໄຈທາງດ້ານຕົວຜູ້ຮຽນ ໂດຍສະເພາະ ການແບ່ງເວລາເຂົ້າຮຽນພາສາອັງກິດແຕ່ລະມື້ມີໜ້ອຍເປັນສາເຫດເຮັດໃຫ້ນັກສຶກສາເອງເວົ້າພາສາອັງກິດບໍ່ໄດ້ດີ ແລະ ພື້ນຖານພາສາອັງກິດກ່ອນເຂົ້າຮຽນໃນມະຫາວິທະຍາໄລຕໍ່າເຮັດໃຫ້ຕົນເອງບໍ່ມີຄວາມກະຕືລືລົ້ນໃນການຮຽນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄໍາຂອບໃຈ

ການຄົ້ນຄວ້າຄັ້ງນີ້ ປະສົບຜົນສໍາເລັດໄດ້ ຍ້ອນການສະໜັບສະໜູນທຶນຈາກ ມະຫາວິທະຍາໄລສຸພານຸວົງ ງົບປະມານປີ 2018. ດັ່ງນັ້ນ, ທີມງານຄົ້ນຄວ້າພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງການນໍາຂອງ ມະຫາວິທະຍາໄລສຸພານຸວົງ ທີ່ໃຫ້ໂອກາດ ແລະ ໃຫ້ທຶນຄົ້ນຄວ້າໃນຄັ້ງນີ້.

## 8. ເອກະສານອ້າງອີງ

Ayako, H., (2004). Student demotivation in the foreign language classroom. Takushoku Langu. Stud., 107: 119-136

Brown, H. D. (2000). Principles of language learning and teaching. New Jersey, NJ: Prentice-Hall.

Dornyei, Z. (2001). Teaching and research in motivation. England: Pearson Education. Designin

Dornyei, Z., 1998. Demotivation in foreign language learning. Seattle, WA.

Falout, J., & Maruyama, M. (2004). A comparative study of proficiency and learner demotivation. The Language Teacher, 28, 3-9.

Falout, J., & Maruyama, M. (2004). A comparative study of proficiency and learner demotivation. The Language Teacher, 28, 3-9.

Gorham, J., & Christophel, D. (1992). Students' perception of teacher behaviors as motivating and demotivating factors in college classes. Communication Quarterly, 40, 239-52.

Gorham, J., & Christophel, D. (1992). Students' perception of teacher behaviors as motivating and demotivating factors in college classes. Communication Quarterly, 40, 239-52

Habibi, A., Sofwan, M., & Mukminin, A. (2016). English teaching implementation in Indonesian pesantrens: Teachers' demotivation factors. Indonesian Journal of English Teaching, 5(2), 199-213

Ikeno, O. (2002). Motivating and demotivating factors in foreign language learning: A preliminary investigation. Ehime University Journal of English Education Research, 2, 1-19.

Kamal, H.(2012) Demotivating factors on English speaking skill: A study of EFL language learners and teachers' attitudes. World Applied Sciences Journal 17 (3): 327-339, 2012ISSN 1818-4952

Kiwa, A., 2004. What 'demotivates' language learners? Qualitative study on demotivational factors and learners' reactions. Bull. Toyo Gakuen Univ., 12: 39-47.

Kikuchi, K. and H. Sakai, 2009. Japanese learners' demotivation to study English: A survey study. JALT J., 31: 183-204.

Mukminin, A., Noprival, Masbirorotni, Sutarno, Arif, N., & Maimunah. (2015). EFL Speaking anxiety among senior high school students and policy recommenddations. Journal of Education and Learning, 9(3), 217-225.

Oxford (1998) Demotivating Factors for English Language Learning Among University

Students. Journal of Social Sciences 8 (2): 189-195, 2012 ISSN 1549-3652

Sakai, H., & Kikuchi, K. (2009). An analysis of demotivation in the EFL classroom. System, 37, 57-69

ຕາຕະລາງ 1: ການເລືອກກຸ່ມຕົວຢ່າງຕາມວິທີຂອງ Krecie Mogan

| S | P | S | P | S | P | S |
|---|---|---|---|---|---|---|
| 10 | 45 | 40 | 80 | 66 | 130 | 97 |
| 14 | 50 | 44 | 85 | 70 | 140 | 103 |
| 19 | 55 | 48 | 90 | 73 | 150 | 108 |
| 24 | 60 | 52 | 95 | 76 | 160 | 113 |
| 28 | 65 | 56 | 100 | 80 | 170 | 118 |
| 32 | 70 | 59 | 110 | 86 | 180 | 123 |
| 36 | 75 | 63 | 120 | 92 | 190 | 127 |

ຕາຕະລາງ 2 ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ

| I. ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ | | N | Mean | S.D |
|---|---|---|---|---|
| 1 | ການອະທິບາຍບົດຮຽນຂອງອາຈານບໍ່ຈະແຈ້ງ ຍາກທີ່ຈະເຂົ້າໃຈ | 92 | 3.30 | 0.78 |
| 2 | ການອອກສຽງພາສາອັງກິດຂອງອາຈານ ຍາກທີ່ຈະເຂົ້າໃຈ | 92 | 3.30 | 0.88 |
| 3 | ເວລາຂຶ້ນຫ້ອງສອນອາຈານບໍ່ຄ່ອຍໄດ້ນຳໃຊ້ ກິດຈະກຳສົ່ງເສີມການເວົ້າ ເຮັດໃຫ້ນັກສຶກສາ ບໍ່ຄ່ອຍໄດ້ເວົ້າພາສາອັງກິດໃນຫ້ອງຮຽນ | 92 | 3.96 | 0.91 |
| 4 | ການສອນຂອງອາຈານ ສ່ວນໃຫຍ່ເວົ້າພາສາລາວຫຼາຍເກີນໄປເຮັດໃຫ້ນັກສຶກສາເບື່ອ ແລະ ບໍ່ຢາກເວົ້າພາສາອັງກິດ | 92 | 3.85 | 0.93 |
| 5 | ເທັກນິກການສອນຂອງອາຈານຍັງບໍ່ທັນຫຼາກຫຼາຍ ສ່ວນໃຫຍ່ແມ່ນໃຊ້ເທັກນິກແບບເດີມໆ | 92 | 3.80 | 0.93 |
| 6 | ການຊຸກຍູ້ສົ່ງເສີມ ໃຫ້ນັກສຶກສາ ມີສ່ວນຮ່ວມ ແລະ ເວົ້າພາສາອັງກິດໃນຫ້ອງຮຽນຍັງບໍ່ທັນເຮັດໄດ້ດີ | 92 | 3.57 | 0.80 |
| 7 | ການກຽມຄວາມພ້ອມກ່ອນການສອນຂອງອາຈານຍັງຕ່ຳ ບາງຄັ້ງຍັງກຳບົດຮຽນບໍ່ໄດ້ | 92 | 3.03 | 0.66 |
| 8 | ອາຈານສອນ ໃຫ້ຄະແນນບໍ່ຄ່ອຍຍຸດຕິທຳມີການຫັກຫຼັງຊັ່ງບໍ່ຮຽງ | 92 | 3.40 | 1.16 |
| 9 | ການເກັບກຳສະພາບຈຸດພິເສດຂອງນັກສຶກສາ ຍັງເຮັດບໍ່ທັນໄດ້ດີ | 92 | 3.34 | 0.89 |
| 10 | ອາຈານມັກຈະຫົວຂ້ອນເວລານັກສຶກສາເວົ້າຜິດຫຼືອອກສຽງຜິດ ເຮັດໃຫ້ນັກສຶກສາ ບໍ່ກ້າເວົ້າ ແລະບໍ່ມີຄວາມໝັ້ນໃຈ | 92 | 2.80 | 1.38 |

ຕາຕະລາງ 3: ປັດໄຈທາງດ້ານຕົວຜູ້ຮຽນ

| II. ປັດໄຈທາງດ້ານຕົວຜູ້ຮຽນ | | N | Mean | S.D |
|---|---|---|---|---|
| 1 | ພື້ນຖານພາສາອັງກິດກ່ອນເຂົ້າຮຽນໃນມະຫາວິທະຍາໄລຕ່ຳເຮັດໃຫ້ຕົນເອງບໍ່ມີຄວາມກະຕືລືລົ້ນໃນການຮຽນ | 92 | 3.88<br>46 | 1.07 |

| | | | | |
|---|---|---|---|---|
| 2 | ຕົນເອງ ມີບັນຫາເລື້ອງການອອກສຽງພາສາອັງກິດ ເຊັ່ນ: ຫັນລີ້ນບໍ່ເປັນ, ອະໄວຍະວະທາງປາກ ຜິດປົກກະຕິ | 92 | 3.00 | 1.26 |
| 3 | ຕົນເອງບໍ່ມີພອນສະຫວັນ-ພອນສະແຫວງໃນການຮຽນຮູ້ພາສາອັງກິດ | 92 | 2.76 | 1.03 |
| 4 | ຕົນເອງບໍ່ມີຄວາມມັກຮັກໃນການຮຽນຮູ້ພາສາອັງກິດ ຕັດສິນໃຈມາຮຽນ ເພາະຜູ້ປົກຄອງບັງຄັບໃຫ້ມາຮຽນ | 92 | 1.96 | 1.21 |
| 5 | ການສື່ສານຂອງຕົນເອງ ບໍ່ຄ່ອຍເກັ່ງ ເປັນຜົນເຮັດໃຫ້ຕົນເວົ້າພາສາອັງກິດບໍ່ເກັ່ງ | 92 | 3.53 | 1.02 |
| 6 | ຕົນເອງບໍ່ມີຄວາມໝັ້ນໃຈເວລາຈະເວົ້າພາສາອັງກິດ ເພາະຢ້ານຜິດ ແລ້ວໝູ່ເພື່ອນຈະຫົວຂ້ອນ | 92 | 3.57 | 0.98 |
| 7 | ຄວາມຮູ້ທາງດ້ານຄໍາສັບພາສາອັງກິດ ມີໜ້ອຍ ແລະຈໍາກັດ ເຮັດໃຫ້ຕົນເອງມີບັນຫາໃນການເວົ້າພາສາອັງກິດ | 92 | 3.73 | 1.15 |
| 8 | ຄວາມຮູ້ທາງດ້ານຫຼັກໄວຍາກອນພາສາອັງກິດ ມີໜ້ອຍ ແລະຈໍາກັດ ເຮັດໃຫ້ຕົນເອງມີບັນຫາໃນການເວົ້າພາສາອັງກິດ | 92 | 3.61 | 1.06 |
| 9 | ຕົນເອງບໍ່ມີຄວາມຮູ້ໃນການ ຂຶ້ນ-ລົງ ສຽງ (intonation) ຂອງພາສາອັງກິດ ເປັນສາເຫດເຮັດໃຫ້ຕົນ ເວົ້າພາສາອັງກິດບໍ່ເກັ່ງ | 92 | 3.53 | 1.20 |
| 10 | ການຈັດແບ່ງເວລາເຂົ້າໃນການຮຽນພາສາອັງກິດແຕ່ລະມື້ ມີນ້ອຍ ເປັນສາເຫດເຮັດໃຫ້ຕົນເວົ້າພາສາອັງກິດບໍ່ໄດ້ດີ | 92 | 4.19 | 0.80 |

ຕາຕະລາງ 4: ປັດໄຈດ້ານຫຼັກສູດ

| III. ປັດໄຈດ້ານຫຼັກສູດ | | N | Mean | S.D |
|---|---|---|---|---|
| 1 | ຫຼັກສູດທີ່ພວມໃຊ້ຍັງບໍ່ສອບຄ່ອງຕາມຈຸດປະສົງ ເພາະມີໝວດວິຊາສະເພາະໜ້ອຍເກີນໄປ | 92 | 4.65 | 0.62 |
| 2 | ລາຍວິຊາຮຽນຮຽນທີ່ສົ່ງເສີມການເວົ້າພາສາອັງກິດ ມີໜ້ອຍ ເຮັດໃຫ້ຜູ້ຮຽນເວົ້າພາສາອັງກິດບໍ່ໄດ້ດີ | 92 | 4.53 | 0.70 |
| 3 | ການຈັດການຮຽນ-ການສອນບໍ່ໄປຕາມທິດສະດີການຮຽນຮູ້ (Bloom taxonomy) | 92 | 3.73 | 0.96 |
| 4 | ການສ້າງກິດຈະກໍາສົ່ງເສີມການເວົ້າພາສາອັງກິດບໍ່ຄ່ອຍມີ ເຮັດໃຫ້ນັກສຶກສາເວົ້າພາສາອັງກິດບໍ່ໄດ້ດີ | 92 | 4.15 | 0.73 |
| 5 | ອຸປະກອບຮັບໃຊ້ເຂົ້າໃນການຮຽນ-ການສອນບໍ່ພຽງພໍ ແລະ ບໍ່ທັນສະໄໝ | 92 | 3.96 | 0.82 |
| 6 | ຫຼັກສູດບໍ່ໄດ້ຮັບການປະເມີນ ແລະປັບປຸງເປັນເວລາຫຼາຍປີ | 92 | 3.88 | 1.24 |
| 7 | ການຈັດລາຍວິຊາຮຽນໃນແຕ່ລະພາກຮຽນຍັງບໍ່ທັນເໝາະສົມ, ບາງພາກຮຽນກໍ່ມີວິຊາໝວດທົ່ວໄປຫຼາຍເກີນໄປ | 92 | 4.46 | 0.76 |
| 8 | ການສອນຂອງຄູບໍ່ຄົບຕາມຫຼັກສູດ ເນື່ອງຈາກວ່າອາຈານມີປະຊຸມຫຼາຍເກີນໄປ | 92 | 3.46 | 0.90 |
| 9 | ການກໍານົດໜ່ວຍກິດໃນລາຍວິຊາບໍ່ເໝາະສົມ ບາງວິຊາຍາກເກີນໄປ | 92 | 3.46 | 0.64 |

| | | | | |
|---|---|---|---|---|
| 10 | ເກນການໃຫ້ຄະແນນແຕ່ລະລາຍວິຊາຮຽນຍັງບໍ່ຈະແຈ້ງ | 92 | 3.57 | 0.94 |

ຕາຕະລາງ 5 ປັດໄຈທາງດ້ານສັງຄົມ

| IV. ປັດໄຈທາງດ້ານສັງຄົມ | | N | Mean | S.D |
|---|---|---|---|---|
| 1 | ໃນສັງຄົມຫຼືໝູ່ບ້ານຂ້ອຍບໍ່ຄ່ອຍໄດ້ນຳໃຊ້ພາສາອັງກິດ ຂ້ອຍເລີຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 3.42 | 1.06 |
| 2 | ໃນຄອບຄົວຂອງຂ້ອຍ ບໍ່ມີໃຜສາມາດເວົ້າພາສາອັງກິດ ເປັນສາເຫດເຮັດໃຫ້ຂ້ອຍບໍ່ຢາກຮຽນແລະເວົ້າພາສາອັງກິດ | 92 | 3.03 | 1.37 |
| 3 | ວຽກງານທີ່ຂ້ອຍຢາກເຮັດ ບໍ່ໄດ້ນຳໃຊ້ພາສາອັງກິດ ຂ້ອຍເລີຍບໍ່ຢາກຮຽນແລະ ເວົ້າພາສາອັງກິດ | 92 | 2.50 | 1.30 |
| 4 | ຂ້ອຍເປັນເພດຍິງ/ຊາຍ ບໍ່ເໝາະສົມທີ່ຈະເວົ້າພາສາອັງກິດນຳຄົນຕ່າງປະເທດ | 92 | 1.61 | 1.02 |
| 5 | ການເວົ້າພາສາອັງກິດ ອາດເຮັດໃຫ້ວັດທະນາທຳຊາວຕາເວັນຕົກ ມາທຳລາຍວັດທະນາທຳຊາດຕົນ ຂ້ອຍເລີຍບໍ່ຢາກຮຽນແລະ ເວົ້າພາສາອັງກິດ | 92 | 1.53 | 0.98 |

ຕາຕະລາງ 6: ປັດໄຈທາງດ້ານຫ້ອງຮຽນ ແລະສິ່ງແວດລ້ອມອ້ອມຂ້າງ

| V. ປັດໄຈທາງດ້ານຫ້ອງຮຽນ ແລະສິ່ງແວດລ້ອມອ້ອມຂ້າງ | | N | Mean | S.D |
|---|---|---|---|---|
| 1 | ຫ້ອງຮຽນມີຄວາມເປະເປື້ອນ ແລະມີສຽງນັງ ເປັນເຫດເຮັດໃຫ້ຂ້ອຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 3.4231 | 1.23 |
| 2 | ການຈັດນັກສຶກສາໃນແຕ່ລະຫ້ອງມີຈຳນວນຫຼາຍເກີນໄປ ເປັນເຫດເຮັດໃຫ້ຂ້ອຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 2.6923 | 1.04 |
| 3 | ບັນຍາກາດໃນຫ້ອງຮຽນຮ້ອນອົບເອົ້າ ເປັນເຫດເຮັດໃຫ້ຂ້ອຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 4.0385 | 1.24 |
| 4 | ຂ້ອຍຢາກຝຶກເວົ້າພາສາອັງກິດໃນຫ້ອງຮຽນ ແຕ່ອາຈານບໍ່ເປີດໂອກາດໃຫ້ເປັນເຫດເຮັດໃຫ້ຂ້ອຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 3.0000 | 1.13 |
| 5 | ສິ່ງແວດລ້ອມອ້ອມຂ້າງບໍ່ໜ້າຢູ່ເປັນເຫດເຮັດໃຫ້ຂ້ອຍບໍ່ມີຄວາມກະຕືລືລົ້ນໃນການຮຽນແລະເວົ້າພາສາອັງກິດ | 92 | 2.8077 | 0.89 |

ຕາຕະລາງ 7: ສັງລວມ ຄ່າສະເລ່ຍປັດໃຈທັງ 5

| ປັດໄຈຫຼຸດແຮງກະຕຸ້ນ ໃນການເວົ້າພາສາອັງກິດ ຂອງນັກສຶກສາ ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ | | N | Mean | S.D |
|---|---|---|---|---|
| 1 | ປັດໄຈດ້ານການສິດສອນ ແລະ ບຸກຄະລິກຄະພາບສ່ວນຕົວຂອງຜູ້ສອນ | 92 | 3.46 | 0.93 |
| 2 | ປັດໄຈທາງດ້ານຕົວຜູ້ຮຽນ | 92 | 3.38 | 1.08 |
| 3 | ປັດໄຈດ້ານຫຼັກສູດ | 92 | 3.98 | 0.83 |

| | | | | |
|---|---|---|---|---|
| 4 | ປັດໃຈທາງດ້ານສັງຄົມ | 92 | 1.21 | 0.57 |
| 5 | ປັດໃຈທາງດ້ານຫ້ອງຮຽນ ແລະສິ່ງແວດລ້ອມອ້ອມຂ້າງ | 92 | 1.59 | 0.55 |